ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 98 /ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 27.1.20

# ແຈ້ງການ

ຮຽນ: - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ.

ເລື່ອງ: ທິດຊີ້ນຳກ່ຽວກັບການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກ ສາຍພັນໃໝ່ (ໄວຣັດ ໂຄໂລນາ Novel Corona Virus: NCOV).

- ອີງຕາມການລາຍງານ ຂອງກະຊວງສາທາລະນະສຸກ ຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 27 ມັງກອນ 2020;

- ອີງຕາມຂໍ້ຕົກລົງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 77/ນຍ, ລົງວັນທີ 10 ທັນວາ 2018 ວ່າດ້ວຍການແຕ່ງຕັ້ງໃນຄະນະກຳມະການກັນ ແລະ ຄວບຄຸມພະຍາດຕິດຕໍ່ລະດັບຊາດ;

- ອີງຕາມການຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 27 ມັງກອນ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້: ການລະບາດ ຂອງໄວຣັສ ໂຄໂລນາ (Novel Corona Virus: NCOV) ມີຜົນກະທົບໃນວົງກວ້າງ ທັງຕໍ່ສັງຄົມ ແລະ ເສດຖະກິດ. ລັດຖະບານລາວ ຖືການປ້ອງກັນ, ຄວບຄຸມ ແລະ ແກ້ໄຂບັນຫາດັ່ງກ່າວນີ້ ເປັນບັນຫາສຳຄັນ ແລະ ເລັ່ງດ່ວນ ຈຶ່ງຮຽກຮ້ອງໃຫ້ທຸກພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ ຕ້ອງໄດ້ຮ່ວມມືກັນ ແລະ ພ້ອມກັນຍົກລະດັບຄວາມຮັບຜິດຊອບໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂບັນຫາດັ່ງກ່າວ ໃຫ້ຮັບປະກັນ ແລະ ທັນສະພາບການ.

1. ມອບໃຫ້ທ່ານ ລັດຖະມົນຕີກະຊວງສາທາລະນະສຸກ, ຫົວໜ້າຄະນະກຳມະການກັນ ແລະ ຄວບຄຸມພະຍາດຕິດຕໍ່ລະດັບຊາດ ສືບຕໍ່ດຳເນີນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂບັນຫາການລະບາດຂອງພະຍາດດັ່ງກ່າວ ຢ່າງໃກ້ຊິດ ແລະ ລາຍງານສະພາບໃຫ້ລັດຖະບານ ເປັນປົກກະຕິທຸກວັນ. ພ້ອມກັນນັ້ນ ກໍໃຫ້ສ້າງຕັ້ງ ແລະ ແຈ້ງຈຸດປະສານຂອງຄະນະ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອຮັບການແຈ້ງສະພາບ, ແຈ້ງຂ່າວ ແລະ ການຂໍການສະໜັບສະໜູນ, ຮ່ວມມືຊ່ວຍເຫຼືອ ຈາກພາກສ່ວນຕ່າງໆ ແລະ ສັງຄົມ.

2. ໃຫ້ແຕ່ງຕັ້ງຄະນະສະເພາະກິດ ໂດຍມອບໃຫ້ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ເປັນຫົວໜ້າ ແລະ ໃຫ້ຄະນະກຳມະການກັນ ແລະ ຄວບຄຸມພະຍາດຕິດຕໍ່ລະດັບຊາດ ເປັນຄະນະຊ່ວຍວຽກ ເພື່ອປະສານກັບຂະແໜງການ ແລະ ທ້ອງຖິ່ນ ປະເມີນຜົນກະທົບຂອງການລະບາດພະຍາດ ໄວຣັສ ໂຄໂລນາ ຕໍ່ປະເທດເຮົາ, ພ້ອມທັງ ກຳນົດມາດຕະການໃນການຮັບມືແຕ່ລະດ້ານໃຫ້ລະອຽດ ແລະ ຮັດກຸມ ໂດຍສະເພາະ ບັນດາມາດຕະການທີ່ພົວພັນເຖິງ :

- ການກວດກາ ຢູ່ຈຸດ ທີ່ມີຄວາມສ່ຽງ ເປັນຕົ້ນ ແມ່ນເຂດຊາຍແດນ, ສະໜາມບິນ, ສະຖານີລົດໂດຍສານ, ໂຮງໝໍ, ຕະຫຼາດ ແລະ ຈຸດສ່ຽງຕ່າງໆ ເພື່ອຄວບຄຸມ ແລະ ປ້ອງກັນ ບໍ່ໃຫ້ພະຍາດ ແຜ່ລະບາດ.

- ກະກຽມຈຸດບໍລິການສາທາລະນະສຸກ ໃນທົ່ວປະເທດ ທີ່ສາມາດຮອງຮັບ ຄົນເຈັບທີ່ຕິດເຊື້ອພະຍາດຈຸລະໂລກສາຍພັນໃໝ່ດັ່ງກ່າວນັ້ນ ໃຫ້ເປັນບ່ອນປິ່ນປົວລວມສູນສະເພາະ ເພື່ອເປັນມາດຕະການຄວບຄຸມພະຍາດ ບໍ່ໃຫ້ແຜ່ລາມ ໄປສູ່ເຂດອື່ນ.

- ໂຄສະນາເຜີຍແຜ່ ແລະ ໃຫ້ຂໍ້ມູນຂ່າວສານຜ່ານສື່ຕ່າງໆ ໃຫ້ແກ່ສັງຄົມ ຢ່າງກວ້າງຂວາງ ກ່ຽວກັບວິທີປ້ອງກັນການຕິດເຊື້ອພະຍາດ, ການກວດກາອາການຂັ້ນພື້ນຖານ ແລະ ການເຂົ້າເຖິງການປິ່ນປົວຮັກສາຢ່າງທັນການ ກໍລະນີສົງໄສມີການຕິດເຊື້ອພະຍາດດັ່ງກ່າວ.

- ແຈ້ງເຕືອນປະຊາຊົນ ກ່ຽວກັບການອຸປະໂພກ-ບໍລິໂພກ ທີ່ຂາດສຸຂະນາໄມ ແລະ ເປັນສາເຫດຂອງການຕິດເຊື້ອພະຍາດຕ່າງໆ ລວມທັງພະຍາດໂຄໂລນາໄວຣັດ.

- ເກັບກຳສະຖິຕິ ແລະ ຕິດຕາມກວດສຸຂະພາບ ຜູ້ເດີນທາງເປັນຕົ້ນ ແມ່ນນັກທ່ອງທ່ຽວ, ນັກສຶກສາ, ນັກທຸລະກິດ, ຜູ້ໃຊ້ແຮງງານ ແລະ ອື່ນໆ ທີ່ ມາຈາກ ສປ ຈີນ.

- ຄວບຄຸມລາຄາ ອຸປະກອນນຳໃຊ້ສຳລັບໃນການປ້ອງກັນພະຍາດຈຸລະໂລກ ສາຍພັນໃໝ່ ເປັນຕົ້ນແມ່ນ: ຜ້າອັດປາກ-ດັງ, ຖົງມື, ຊຸດປ້ອງກັນການຕິດເຊື້ອ ແລະ ອື່ນໆ.

- ຄົ້ນຄວ້າ ແລະ ວາງແຜນ ເພື່ອກະກຽມແກ້ໄຂຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ແຮງງານ ຈາກ ສປ ຈີນ ທີ່ມາເຮັດວຽກໃນໂຄງການລົງທຶນຂະໜາດໃຫຍ່ ຢູ່ ສປປ ລາວ.

- ກະກຽມງົບປະມານ ຈາກບ້ວງເງິນແຮລັດຖະບານ ເພື່ອນຳໃຊ້ເຂົ້າໃນວຽກງານທີ່ຈຳເປັນໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດດັ່ງກ່າວ.

3. ມອບໃຫ້ກະຊວງການຕ່າງປະເທດ ເປັນເຈົ້າການປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານກັບບັນດາປະເທດເພື່ອນມິດ ແລະ ອົງການອະນາໄມໂລກ ຢ່າງໃກ້ຊິດ ເພື່ອຕິດຕາມທ່າອ່ຽງ ຂອງການລະບາດພະຍາດ ແລະ ຍາດແຍ່ງການຊ່ວຍເຫຼືອ ໂດຍສະເພາະ ໃນການສົ່ງຊ່ຽວຊານທີມງານແພດ ພ້ອມດ້ວຍອຸປະກອນເຄື່ອງມື, ຢາ, ວັກຊິນປ້ອງກັນ ໃນກໍລະນີທີ່ມີການລະບາດໃຫຍ່. ພ້ອມນີ້ ກໍ່ໃຫ້ສະຖານທູດ ແລະ ກົງສູນລາວ ປະຈຳ ສປ ຈີນ ຕິດຕາມ ຢ່າງໃກ້ຊິດ ແລະ ປະສານງານກັບເພື່ອນຈີນ ທັງອຳນວຍຄວາມສະດວກ ແລະ ຊ່ວຍເຫຼືອພົນລະເມືອງລາວ, ນັກທ່ອງທ່ຽວ, ນັກທຸລະກິດ ແລະ ນັກສຶກສາລາວ ທີ່ກຳລັງດຳລົງຊີວິດ ແລະ ສຶກສາຮ່ຳຮຽນຢູ່ ສປ ຈີນ ແລະ ລາຍງານສະພາບໃຫ້ເປັນປະຈຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ບັນດາສະມາຊິກລັດຖະບານ ທ່ານລະ | 01 ສະບັບ |
| 4. ອົງການຈັດຕັ້ງພັກ ບ່ອນລະ | 01 ສະບັບ |
| 5. ສູນກາງແນວລາວສ້າງຊາດ | 01 ສະບັບ |
| 6. ອົງການຈັດຕັ້ງມະຫາຊົນ | 01 ສະບັບ |
| 7. ກະຊວງການຕ່າງປະເທດ | 01 ສະບັບ |
| 8. ກົມກວດກາ, ຫສນຍ | 01 ສະບັບ |
| 9. ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ |
| 10. ສຳເນົາ | 01 ສະບັບ |